ກໍລະນີສຶກສາ

# ການເພາະປູກເຄື່ອງປ່າຂອງດົງເຮັດໃຫ້ຊາວກະສິກອນມີລາຍຮັບເພີ່ມຂຶ້ນ

## ການປູກໝາກໜອດ ທີ່ເມືອງຄູນ ແຂວງຊຽງຂວາງ



**ເພີ່ມປະສິດທິພາບການຫຼຸດຜ່ອນຄວາມທຸກຍາກຜ່ານການພັດທະນາວິສາຫະກິດກະສິກຳ**

*ບົດຮຽນຈາກໂຄງການພັດທະນາວິສາຫະກິດກະສິກຳຂະໜາດນ້ອຍໃນເຂດພູດອຍ ສປປ ລາວ*

NAFRI National Agriculture and Forestry Research Institute

ກ.ສ.ກ.ປ NAFES

CIAT 45 Centro Internacional de Agricultura Tropical International Center for Tropical Agriculture A Remarkable Record of Science for Change Since 1967

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

# ການປູກໝາກໝອດ ທີ່ເມືອງຄູນ ແຂວງຊຽງຂວາງ

ປະຊາຊົນທີ່ຕັ້ງຖິ່ນຖານໃນກຸ່ມບ້ານສຳພັນໄຊເມືອງຄູນ ແຂວງຊຽງຂວາງ ເຄີຍເຂົ້າປ່າເກັບໝາກໝອດ ແຕ່ໃນປະຈຸບັນເຂົາເຈົ້າສາມາປູກໃນຮົ້ວສວນຂອງເຂົາເຈົ້າ ແລະ ເກັບຜົນຜະລິດດັ່ງກ່າວໄດ້ 3.2 ໂຕນ/ເຮັກຕາ/ປີ ສ້າງລາຍຮັບໃຫ້ຄອບຄົວສູງເຖິງ 4.8 ລ້ານກີບ/ເຮັກຕາ. ເຖິງແມ່ນວ່າຊາວກະສິກອນຈະພົບບັນຫາຫຍຸ້ງຍາກໃນເວລາເລີ່ມປູກໝາກໝອດ ແຕ່ໝາກຜົນທີ່ໄດ້ຮັບກໍ່ເປັນການຊຸກຍູ້ໃຫ້ເຂົາເຈົ້າຄົ້ນຄວ້າຊອກຫາວິທີທີ່ເຮັດໃຫ້ໄດ້ຜົນຜະລິດຫຼາຍທີ່ສຸດ.

ພາກເອກະຊົນມີຄວາມຍິນດີຊ່ວຍເຫຼືອຊາວກະສິກອນດ້ວຍການສະໜອງແນວພັນ ແລະ ຊຸກຍູ້ການຝຶກອົບຮົມ ເພື່ອພັດທະນາຂອດການຜະລິດ ເຊິ່ງກຸ່ມບ້ານມີບົດບາດເປັນເວທີປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນລະຫວ່າງບັນດາບ້ານຕ່າງໆ ແລະ ລະຫວ່າງຊາວກະສິກອນ ແລະ ພາກເອກະຊົນ

# ປະຫວັດຄວາມເປັນມາ

ໝາກໝອດແມ່ນໝາກໄມ້ທີ່ເກີດຢູ່ໃນປ່າ ແລະ ຊາວບ້ານກໍ່ເກັບເອົາມາຂາຍ. ໝາກໝອດປ່າຂອງລາວມີ ເປືອກເປັນສີມ້ວງແກ່ ແລະ ມີກິ່ນຫອມ. ໂຮງງານແປຮູບໝາກໄມ້ ໂພນງາມໃຕ້ແມ່ນຜູ້ເກັບຊື້ໝາກໝອດ ເພື່ອສະກັດເອົານ້ຳຫົວເຊື້ອ ແລ້ວສົ່ງໃຫ້ກຸ່ມບໍລິສັດກະສິກອນລາວໃນນະຄອນຫຼວງວຽງຈັນເພື່ອຜະລິດ ກວານໝາກໝອດສົ່ງອອກຂາຍໃຫ້ປະເທດຕ່າງໆໃນທະວີບເອີລົບ.

# ແຜນວາດຕ່ອງໂສ້ການຕະຫຼາດສຳລັບໝາກໝອດ

ໃນເວລາທີ່ໂຄງການພັດທະນາວິສາຫະກິດກະສິກຳ (AEDP) ໄດ້ເລີ່ມຈັດຕັ້ງປະຕິບັດໃນກຸ່ມບ້ານສຳພັນ ໄຊໃນປີ 2005 ຊາວກະສິກອນໄດ້ເລືອກເອົາໝາກໝອດທີ່ເປັນເຄື່ອງປ່າຂອງດົງຊະນິດໜຶ່ງເປັນຜະລິດຕະພັນບູລິມະສິດຂອງພວກເຂົາ. ພະນັກງານສົ່ງເສີມກະສິກຳກໍ່ໄດ້ນຳພາຊາວກະສິກອນສຶກສາຕ່ອງໂສ້ການຕະຫຼາດແບບມີສ່ວນຮ່ວມ ເລີ່ມຈາກກຸ່ມບ້ານສຳພັນໄຊຈົນຮອດຕະຫຼາດໃນແຂວງ.

## ການເກັບກ່ຽວໝາກໝອດຂອງຊາວກະສິກອນ

ໂດຍທົ່ວໄປ ຊາວບ້ານເກັບໝາກໝອດປ່າໃນລະຫວ່າງເດືອນມິຖຸນາ ຫາເດືອນສິງຫາ ແລະຂາຍໃນລາຄາ 500 ກີບ/ກິໂລ. ຍ້ອນການຂົນສົ່ງມີຄວາມຫຍຸ້ງຍາກລຳບາກ ຊາວກະສິກອນເກັບໝາກໝອດໄດ້ພຽງ 20 ກິໂລ/ມື້ເທົ່ານັ້ນ ຄິດເປັນເງິນ 10,000 ກີບ/ມື້. ໃນປີ 2005 ສາມາດເກັບໝາກໝອດໄດ້ 18 ໂຕນຈາກປ່າໃນເມືອງຄູນ (ເຂດກຸ່ມບ້ານສຳພັນໄຊ ແລະ ໂພນງາມ).

## ຄວາມຕ້ອງການຂອງຕະຫຼາດ

ໂຮງງານໂພນງາມໃຕ້ຮັບຊື້ໝາກໝອດຈາກກຸ່ມບ້ານ ໂດຍຜ່ານຜູ້ເກັບຊື້ໃນທ້ອງຖິ່ນສອງຄົນ ແລະ ຮັບຊື້ ຈາກຊາວກະສິກອນ 20 ໂຕນ/ປີ ເຊິ່ງທາງໂຮງງານມີໂຄຕ້າໃນການສະໜອງໝາກໝອດປ້ອນໂຮງງານໃນວຽງຈັນ 170 ໂຕນ/ປີ ແຕ່ໃນປີ 2005 ເກັບຊື້ໄດ້ພຽງແຕ່ 50 ໂຕນເທົ່ານັ້ນເຊິ່ງຄວາມຕ້ອງການໃນຕະຫຼາດເອີລົບມີປະມານ 60,000 ໂຕນ/ປີ.

ໂຮງງານໂພນງາມໃຕ້ເປັນໂຮງງານນ້ອຍ ມີອຸບປະກອນເຄື່ອງມືທີ່ງ່າຍດາຍ ເນື່ອງຈາກມີຄວາມຕ້ອງການສູງໃນຕະຫຼາດເອີລົບ ຈິ່ງມີນັກລົງທຶນຫຼາຍຄົນສົນໃຈ ແລະ ເຫັນຄວາມເປັນໄປໄດ້ໃນການສ້າງໂຮງງານແປຮູບຂະໜາດໃຫຍ່ ແຕ່ການສະໜອງວັດຖຸດິບຊໍ້າພັດຍັງບໍ່ພຽງພໍແນວຄວາມຄິດດັ່ງກ່າວຈິ່ງຍັງບໍ່ປາ ກົດຜົນຢ່າງເປັນຮູບປະທໍາ. ປັດໃຈທີ່ເຮັດໃຫ້ການສະໜອງໝາກໝອດມີປະລິມານຕ່ໍາມີ: ຄວາມຍາກລໍາບາກ ໃນການເຂົ້າປ່າໃນລະດູຝົນແຮງງານ ທີ່ໃຊ້ແບກຫາບມີຈໍາກັດ ແລະ ໝາກຜົນທີ່ໄດ້ຮັບກໍ່ບໍ່ແນ່ນອນ. ໃນແຕ່ລະປີສາມາດເກັບໝາກໝອດໄດ້ພຽງແຕ່ 3 ເດືອນ ເຮັດໃຫ້ໂຮງງານຕ້ອງເຮັດການຜະລິດໄລຍະສັ້ນ ແລະ ເຮັດໃຫ້ໄດ້ຮັບຜົນຕອບແທນຈາກການລົງທຶນຊ້າ.

ທາງໂຮງງານໄດ້ທົດລອງປູກໝາກໝອດປ່າ ແລະ ບອກວ່າໄດ້ຮັບຜົນຜະລິດ 4-8 ໂຕນ/ເຮັກຕາ ແຕ່ຖ້າມີການບໍລິຫານຈັດການທີ່ດີ ໝາກໝອດອາດສາມາດໃຫ້ໝາກໄດ້ເຖິງ 5 - 8 ປີ. ເພື່ອເປັນການຮັບປະກັນການສະໜອງໝາກໝອດ ທາງໂຮງງານຈິ່ງໄດ້ຊຸກຍູ້ໃຫ້ຊາວບ້ານປູກໝາກໝອດແຕ່ກໍ່ບໍ່ສໍາເລັດ.




**ຮູບທີ 1: ແຜນວາດຕ່ອງໂສ້ການຕະຫຼາດໝາກໝອດ**

## ໂອກາດຂອງໝາກໝອດ

ຂໍ້ມູນທີ່ໄດ້ຮັບຈາກການສຶກສາຕ່ອງໂສ້ການຕະຫຼາດແບບມີສ່ວນຮ່ວມ (PMCS) ໄດ້ຍົກຂຶ້ນມາສົນທະນາໃນກອງປະຊຸມວິເຄາະບັນຫາກັບທຸກພາກສ່ວນ ໃນລະບົບຕ່ອງໂສ້ການຕະຫຼາດ (SCAF) ເຊິ່ງເປັນໂອ ກາດອັນດີຂອງຊາວກະສິກອນ ໃນການເພີ່ມພູນຜົນຜະລິດກະສິກໍາ ຍ້ອນວ່າຄວາມຕ້ອງການຂອງຕະຫຼາດສູງ ແລະ ຍັງບໍ່ໄດ້ຮັບການຕອບສະໜອງຢ່າງເຕັມເມັດເຕັມໜ່ວຍເທື່ອນອກຈາກນີ້ ທາງໂຮງງານ ໄດ້ສະເໜີໂອກາດສະເພາະດ້ານດັ່ງນີ້

- ໂຮງງານຊ່ວຍເຫຼືອແນວພັນ ແລະ ການຝຶກອົບຮົມເຕັກນິກການປູກໝາກໝອດ ເພື່ອເພີ່ມປະສິດທິພາບໃນການສະໜອງສິນຄ້າແທນການເກັບໝາກໝອກຈາກປ່າ.
- ໂຮງງານຮັບປະກັນລາຄາເກັບຊື້ 1,000 ກີບ/ກິໂລ ຢູ່ໜ້າໂຮງງານ ແລະ 500 ກີບ/ກິໂລ ຢູ່ໜ້າສວນປູກ ໂດຍຜ່ານຜູ້ເກັບຊື້ໃນທ້ອງຖິ່ນທີ່ໄດ້ເຮັດສັນຍາກັບໂຮງງານ.

ຖ້າຜົນຜະລິດຢ່າງຕ່ຳມີ 4 ໂຕນ/ເຮັກຕາ ແລະ ລາຄາໜ້າສວນ 500 ກີບ/ກິໂລ ຊາວກະສິກອນກໍ່ຈະມີ ລາຍຮັບຢ່າງນ້ອຍ 2,000,000 ກີບ/ເຮັກຕາ. ນອກນັ້ນຍັງໄດ້ປຶກສາຫາລືກ່ຽວກັບໂອກາດທີ່ຊາວກະສິກອນສາມາດຂາຍໃຫ້ກັບໂຮງງານໂດຍກົງ.

ຖ້າຊາວກະສິກອນມີລະບົບບໍລິຫານຈັດການທີ່ດີ ກໍ່ຈະສາມາດເກັບກ່ຽວຜົນຜະລິດໄດ້ 2 ຄັ້ງ/ປີ ແລະ ເຮັດໃຫ້ໂຮງງານສາມາດຂະຫຍາຍການຜະລິດຈາກ 3 ເດືອນ/ປີມາເປັນ 6 ເດືອນ/ປີ ແລະ ໄດ້ຮັບຜົນ ຕອບແທນຈາກການລົງທຶນສູງຂຶ້ນ. ເພື່ອສະໜອງຄວາມ ຕ້ອງການຂອງໂຮງງານກໍ່ຄື 170 ໂຕນ/ປີ ຊາວກະສິກອນຈະຕ້ອງປູກໃນເນື້ອທີ່ 20-40 ເຮັກຕາ ພ້ອມນີ້ການຂະຫຍາຍໂຮງງານ ແລະ ການປັບປຸງການຜະລິດ ຈະເຮັດໃຫ້ແຂວງສາມາດເຂົ້າເຖິງຕະຫຼາດໃຫຍ່ໃນທະວີບເອີລົບໄດ້.

ຖ້າຈັດຕັ້ງປະຕິບັດໄດ້ດັ່ງນີ້ແລ້ວຈະເຮັດໃຫ້ໝາກໜອດກາຍເປັນພືດເສດຖະກິດທີ່ສຳຄັນຂອງແຂວງ ແລະ ເປັນທາງເລືອກອີກອັນໜຶ່ງສຳລັບຊາວກະສິກອນບາງຈຳນວນເພື່ອທົດແທນການຖາງປ່າເຮັດໄຮ່ໄດ້.

## ຜົນກະທົບຂອງຕ່ອງໂສ້ການຕະຫຼາດໝາກໜອດ (2005-2007)

ໃນລະຫວ່າງກອງປະຊຸມ SCAF ໂຮງງານເຫັນດີຊ່ວຍເຫຼືອດ້ານອຸປະກອນ ແລະ ເຕັກນິກການປູກໝາກໜອດໃຫ້ຊາວກະສິກອນ. ຍ້ອນວ່າຕະຫຼາດບໍ່ມີຄູ່ແຂ່ງໃນການເກັບຊື້ເຮັດໃຫ້ໂຮງງານກ້າລົງທຶນໃສ່ການຜະລິດສຳລັບຊາວກະສິກອນການພົວພັນກັບ ໂຮງງານໝາຍເຖິງການມີຕະຫຼາດຮອງຮັບທີ່ໝັ້ນຄົງ ແລະ ເປັນປັດໃຈທີ່ສຳຄັນເຮັດໃຫ້ເຂົາເຈົ້າຕັດສິນໃຈທຳການຜະລິດ.

ພະນັກງານສົ່ງເສີມກະສິກຳ ໄດ້ຈັດ ການທັດສະນະສຶກສາໃຫ້ຊາວກະສິກອນ ເພື່ອສຶກສາການປູກໝາກໜອດ ຂອງໂຮງງານ ແລະ ຜູ້ຈັດການໂຮງ ງານໄດ້ມອບແນວພັນ ແລະ ເດີນທາງໄປຝຶກອົບຮົມໃຫ້ຊາວກະສິກອນຢູ່ ເມືອງຄູນດ້ວຍຕົວເອງ ຫົວຂໍ້ຝຶກອົບຮົມລວມມີການກ້າແກ່ນການສ້າງຮາວໃຫ້ໝາກໜອດ ແລະ ການຕັດແຕ່ງເຄືອ.




**ຮູບທີ 2. ການສະໜັບສະໜູນຈາກພາກເອກະຊົນ** ຫົວໜ້າໂຮງງານສະໜອງແນວພັນໝາກໜອດ ໃຫ້ແກ່ຊາວກະສິກອນ ແລະ ການອົບຮົມເພື່ອຮັບປະກັນການສະໜອງວັດຖຸດິບປ້ອນໂຮງງານ.

### ການຂະຫຍາຍການຜະລິດ

ເມື່ອໄດ້ຮັບແຈ້ງການຈາກຫົວໜ້າກຸ່ມບ້ານ ຊາວກະສິກອນກຸ່ມບ້ານສຳພັນໄຊກໍ່ພ້ອມໃຈກັນເຂົ້າຮ່ວມກອງປະຊຸມວິເຄາະຕ່ອງໂສ້ຜູ້ມີສ່ວນຮ່ວມ (SCAF) ຜົນໄດ້ຮັບໄດ້ສະແດງໃຫ້ເຫັນຄວາມສົນໃຈຂອງຊາວກະສິກອນ ເຊິ່ງນອກຈາກ 5 ບ້ານທີ່ເລືອກເອົາໝາກໜອດເປັນຜະລິດຕະພັນບູລິມະສິດແລ້ວຍັງມີອີກ 3 ບ້ານທີ່ມີຄວາມສົນໃຈ. ໃນນີ້ໄດ້ສະໜອງແນວພັນ ແລະ ຈັດການຝຶກອົບຮົມໃຫ້ຊາວກະສິກອນ 168 ຄົວເຮືອນໃນ 8 ບ້ານ ແລະ ຊາວກະສິກອນກໍ່ໄດ້ຈັດຕັ້ງການປູກໝາກໜອດ ລວມເນື້ອທີ່ທັງໝົດມີ 54 ເຮັກຕາ.

ຜົນຜະລິດຂອງຊາວກະສິກອນມີຄວາມແຕກຕ່າງກັນ ໃນຈຳນວນ 168 ຄົວເຮືອນ ມີພຽງແຕ່ 31 ຄົວ ເຮືອນທີ່ເອົາໃຈໃສ່ເບິ່ງແຍງບົວລະບັດສວນປູກເຮັດຮົ້ວອ້ອມສວນປ້ອງກັນສັດ ແລະ ຕັດແຕ່ງເຄືອໝາກໜອດ ແລະ ມີພຽງ 18 ຄົວເຮືອນຈາກ 2 ບ້ານທີ່ມີຜົນຜະລິດທີ່ມີຄຸນນະພາບ ແລະ ຍືນຍົງ. ຜົນຜະລິດຈາກການເກັບກ່ຽວເຫັນໄດ້ຢ່າງຈະແຈ້ງວ່າ ໃນເນື້ອທີ່ 11.5 ເຮັກຕາ ໄດ້ຮັບຜົນຜະລິດສະເລ່ຍ 3.2 ໂຕນ/ເຮັກຕາ ບາງຈຳນວນໄດ້ຮັບຜົນຜະລິດສູງເຖິງ

5 ໂຕນ/ເຮັກຕາ. ຖ້າລວມເອົາຜົນຜະລິດຈາກສອງລະດູ (ເດືອນພຶດສະພາຫາເດືອນກໍລະກົດ ແລະ ເດືອນກັນຍາຫາເດືອນພະຈິກ) ສາມາດເກັບກ່ຽວໄດ້ 36.8 ໂຕນ ຫຼາຍກວ່າການເກັບໝາກໝອດຈາກປ່າສອງເທົ່າ.

| ລາຍການ | ປູກ | ຕັດແຕ່ງເຄືອ | ເກັບກ່ຽວ | ມີທ່າອ່ຽງດີຂຶ້ນ | ປະປ່ອຍ |
|---|---|---|---|---|---|
| ເນື້ອທີ່ປູກ (ຮຕ) | 54 | 17.5 | 11.5 | 30.4 | 6.5 |
| ຈຳນວນບ້ານ | 8 | 5 | 5 | 8 | - |
| ຈຳນວນຄອບຄົວ | 168 | 31 | 18 | 91 | 46 |

**ຕາຕະລາງ 1. ການປູກ ແລະ ເກັບກ່ຽວໝາກໝອດ (2006 - 2007)**

ສາຍເຫດ ແລະ ປັດໃຈຕ່າງໆທີ່ເຮັດໃຫ້ຜົນຜະລິດສ່ວນຫຼາຍຕົກຕ່ຳມີ ໝາກໝອດຊຸ້ນ ບໍ່ໄດ້ເຮັດໃຫ້ຕົ້ນໝາກໝອດຕາຍແຕ່ເຮັດໃຫ້ຜົນຜະລິດບໍ່ໄດ້ດີ, ບໍ່ເຮັດຮົ້ວອ້ອມ ຫຼື ບໍ່ລ້ອມແປງຮົ້ວ ແລະ ບໍ່ຕັດແຕ່ງເຄືອໃຫ້ມີເຄືອໃໝ່ເກີດຂຶ້ນ. ໃນປີ 2007 ບັນຫາໃໝ່ທີ່ເກີດຂຶ້ນແມ່ນແມງໄມ້ທີ່ທຳລາຍລຳຕົ້ນ ແລະ ເຄືອໝາກໝອດດ້ານ. ຊາວກະສິກອນຈຳນວນໜຶ່ງມີແນວຄິດຄອຍຄອຍການຊ່ວຍເຫຼືອປັບປຸງໜານປູກຫຼັງການເກັບກ່ຽວແຕ່ບາງຈຳນວນໄດ້ດຳເນີນການປັບປຸງໜານດ້ວຍຕົນເອງ ແລະ ໄດ້ຮັບຜົນຈາກການຜະລິດດັ່ງກ່າວຫຼາຍກວ່າ.

## ການປ່ຽນແປງພຶດຕິກຳການຄ້າຂາຍ

ເພື່ອຮອງຮັບຜົນຜະລິດຈາກແຂວງຊຽງຂວາງ ພໍ່ຄ້າໃໝ່ຈາກ ວຽງຈັນໄດ້ພະຍາຍາມສ້າງໂຮງງານສະກັດໝາກໝອດຂຶ້ນທີ່ເມືອງຄູນ. ການແຂ່ງຂັນທາງທຸລະກິດດັ່ງກ່າວ ອາດເປັນຜົນດີໃຫ້ຊາວກະສິກອນໃນໄລຍະສັ້ນ ແຕ່ໃນໄລຍະຍາວ ມັນອາດຫຼຸດຜ່ອນຄວາມສົນໃຈຂອງນັກລົງທຶນໃນການສະໜັບສະໜູນຊາວກະສິກອນ. ເພື່ອແກ້ໄຂບັນຫານີ້ໄດ້ມີການສະເໜີບັນຫາດັ່ງກ່າວໃນກອງປະຊຸມກຸ່ມບ້ານ ມີຜູ້ຕາງໜ້າຈາກບ້ານທີ່ກ່ຽວຂ້ອງ ໂຮງງານໂພນງາມໃຕ້ອຳນາດການປົກ ຄອງທ້ອງຖິ່ນ ແລະ ທ່ານຮອງເຈົ້າເມືອງເຂົ້າຮ່ວມ. ການແກ້ໄຂບັນຫາດັ່ງກ່າວແມ່ນໃຫ້ໂຮງງານໂພນງາມໃຕ້ໄດ້ຮັບບູລິມະສິດ ເກັບຊື້ໝາກໝອດ ກ່ອນໂຮງງານອື່ນເພາະທາງໂຮງງານເປັນຜູ້ລົງທຶນລົງແຮງ ແຕ່ກໍ່ຕ້ອງມີການເຊັນສັນຍາກັບ ຊາວກະສິກອນເພື່ອເປັນລາຍລັກອັກສອນຢັ້ງຢືນ ແຕ່ໃນທີ່ສຸດແລ້ວທາງໂຮງງານເອງ ເປັນຜູ້ປະຕິເສດການເຮັດສັນຍາແຕ່ຫັນໜ້າໄປພົວພັນກັບແຂວງຫົວພັນ ແລະ ປະເທດຈີນ ເປັນແຫຼ່ງສະໜອງໝາກໝອດໃຫ້.

ເຖິງວ່າເປັນແນວນັ້ນກໍ່ຕາມ ຄວາມສົນໃຈຈາກພໍ່ຄ້າລາຍອື່ນຍັງສູງຢູ່ ແລະ ເຮັດໃຫ້ການຊື້-ຂາຍໝາກໝອດສູງຂຶ້ນເຖິງ 6 ໂຕນໃນປີ 2007. ການແຂ່ງຂັນທາງທຸລະກິດກໍ່ເຮັດໃຫ້ລາຄາໝາກໝອດເພີ່ມຂຶ້ນ ຢ່າງໄວວາໃນການເກັບກ່ຽວຜົນຜະລິດຄັ້ງທີສອງໃນປີ 2007 ເຊິ່ງຊາວກະສິກອນສາມາດຂາຍໄດ້ໃນລາຄາ 1,500 - 2,000 ກີບ/ກິໂລ (ລາຄາຈາກສວນປູກ). ໝາກໝອດຈຳນວນໜຶ່ງຖືກສົ່ງເຂົ້າໂຮງງານ ແຕ່ສ່ວນຫຼາຍແມ່ນສົ່ງຂາຍໃນຕະຫຼາດຕ່າງໆ. ອີງໃສ່ລາຄາດັ່ງກ່າວ ຊາວກະສິກອນທີ່ສາມາດເກັບກ່ຽວໝາກໝອດໄດ້ 4 ໂຕນ ກໍ່ສາມາດສ້າງລາຍຮັບໄດ້ 6 - 8 ລ້ານກີບ.




**Figure 3. Significant changes achieved. Farmers have begun to cultivate passion-fruit; the farm-gate price has increased by x3 and supply has more than doubled.**

## ສະພາບການຜະລິດໃນປະຈຸບັນ

ໃນປະຈຸບັນສະພາບການຕ່າງໆ ຂອງຕ່ອງໂສ້ການຕະຫຼາດຂອງໝາກໜອດ ໃນກຸ່ມບ້ານສຳພັນໄຊ ເມືອງ ຄູນ ແຂວງຊຽງຂວາງ ສາມາດສະຫຼຸບລວມໄດ້ດັ່ງລຸ່ມນີ້:

### ການສະໜອງໝາກໜອດ

ການປູກໝາກໜອດ ເປັນອີກທາງເລືອກໜຶ່ງນອກຈາກການເຂົ້າເກັບເອົາຜົນຜະລິດໃນປ່າໃນຂະນະທີ່ຊາວກະສິກອນຈຳນວນໜຶ່ງມີຜົນຜະລິດຕ່ຳ ຊາວກະສິກອນບາງຄົວເຮືອນໄດ້ຕັ້ງໜ້າເອົາໃຈໃສ່ບົວລະບັດຮັກສາສວນໝາກໜອດຂອງເຂົາເຈົ້າເປັນຢ່າງດີ ແລະ ເປັນເຫດຜົນທີ່ເຮັດໃຫ້ໄດ້ຮັບຜົນຜະລິດບໍ່ຕ່ຳກວ່າ 3,2 ໂຕນ/ເຮັກຕາ. ຖ້າເອົາລາຄາໝາກໜອດມາຄິດໄລ່ແລ້ວເຫັນວ່າຖ້າລາຄາໝາກໜອດ 1,500 ກີບ/ກິໂລ ກໍ່ຈະສ້າງລາຍຮັບໄດ້ເຖິງ 4,800,000 ກີບ/ເຮັກຕາ.

ການປູກໝາກໜອດຂອງຊາວກະສິກອນໄດ້ອີງໃສ່ວິທີການທີ່ໂຮງງານແນະນຳ ແຕ່ບາງຄັ້ງກໍ່ມີບັນຫາທາງ ດ້ານເຕັກນິກວິຊາການ ແລະ ບັນຫາອື່ນໆທີ່ຊາວກະສິກອນບໍ່ສາມາດແກ້ໄຂໄດ້ໃນຂະບວນການຈັດການ ຂອງເຂົາເອງ. ທັງໝົດນີ້ຖືວ່າເປັນປະສົບການທີ່ດີ ທີ່ສາມາດນຳສະເໜີໃນເວລາມີກອງປະຊຸມລະດັບກຸ່ມບ້ານ. ບາງບັນຫາເຊັ່ນແມງໄມ່ທຳລາຍຜົນຜະລິດ ຄວນມີການແນະນຳທາງເຕັກນິກວິຊາການສະເພາະດ້ານ ແລະ ຄວນມີການປະເມີນວິຊາການກ່ຽວຂ້ອງກັບຜົນຜະລິດເພື່ອເປັນແນວທາງປັບປຸງແກ້ໄຂໃນອານາຄົດ.

### ການຊື້-ຂາຍ

ການຊຸກຍູ້ການຜະລິດທີ່ຊາວກະສິກອນໄດ້ຮັບຈາກພາກເອກະຊົນເຊັ່ນ ອຸບປະກອນແນວພັນ ແລະ ການຝຶກອົບຮົມຕ່າງໆ ໄດ້ປ່ຽນແປງການເກັບໝາກໜອດຈາກປ່າໃນເມື່ອກ່ອນມາ ເປັນວິສາຫະກິດກະສິກຳສິ່ງຂາຍໃນທ້ອງຕະຫຼາດ. ເຖິງແມ່ນວ່າໂຮງງານໂພນງາມໃຕ້ບໍ່ໄດ້ເຮັດສັນຍາຊື້-ຂາຍໂດຍກົງກັບຊາວກະສິກອນກໍ່ຕາມ ໂຮງງານກໍ່ໄດ້ຮັບຜົນປະໂຫຍດຈາກການຊື້ຜະລິດຕະພັນຈາກຜູ້ເກັບຊື້ລາຍຍ່ອຍ. ການບໍລິຫານຈັດການຂອງໂຮງງານໂພນງາມໃຕ້ແມ່ນບົດຮຽນອັນດີໃນການຊຸກຍູ້ການມີສ່ວນຮ່ວມ ຈາກພາກເອກະຊົນອື່ນໆ ໃນຕ່ອງໂສ້ຜະລິດຕະພັນໝາກໜອດ.

ການປູກໝາກໜອດທີ່ມີການຄໍ້າປະກັນການສະໜອງສິນຄ້າທີ່ແນ່ນອນສາມາດສ້າງຄວາມສິນໃຈຈາກພໍ່ຄ້າໄດ້ການແຂ່ງຂັນທາງການຄ້າກໍ່ສົ່ງຜົນໃຫ້ລາຄາໝາກໜອດໜ້າສວນເພີ່ມຂຶ້ນຈາກ 500 ກີບ/ກິໂລ ເປັນ 1,500 - 2,000 ກີບ/ກິໂລ. ຜົນໄດ້ຮັບດັ່ງກ່າວນີ້ເຮັດໃຫ້ຊາວກະສິກອນຫັນມາສົນໃຈການປູກຝັງຜະລິດຕະພັນກະສິກຳອື່ນໆອີກ.

# ບົດຮຽນທີ່ຖອດຖອນໄດ້

ການປູກໝາກໜອດໃນແຂວງຊຽງຂວາງສາມາດຖອດຖອນບົດຮຽນໃຫ້ແກ່ການປູກພືດຊະນິດອື່ນໃນຫຼາຍເຂດດັ່ງລຸ່ມນີ້:

## ການປູກເຄື່ອງປ່າຂອງດົງ

ຢູ່ໃນ ສ.ປ.ປ. ລາວ ມີເຄື່ອງປ່າຂອງດົງຫຼາກຫຼາຍຊະນິດພັນທີ່ສາມາດເກັບກູ້ໄດ້ ແຕ່ປະລິມານ ແລະ ຄຸນນະພາບຂອງແຕ່ລະຊະນິດກໍ່ມີຄວາມແຕກຕ່າງກັນ ການເອົາເຄື່ອງປ່າຂອງດົງດັ່ງກ່າວມາຂະຫຍາຍ ພັນດ້ວຍການຫັນເປັນກະສິກຳສວນປູກ ສາມາດສ້າງຜົນປະໂຫຍດໃຫ້ຊາວກະສິກອນດັ່ງນີ້:

- ການປູກເຄື່ອງປ່າຂອງດົງໃສ່ສວນ ຫຼື ຕອນດິນທີ່ແນ່ນອນ ສາມາດຮັບປະກັນຜົນຜະລິດສູງສ້າງລາຍຮັບໃຫ້ຊາວກະສິກອນ ແລະ ເພີ່ມຄວາມໝັ້ນໃຈໃຫ້ໂຮງງານແປຮູບໃນການວາງແຜນການຜະລິດ.
- ການບົວລະບັດຮັກສາທີ່ດີເຮັດໃຫ້ຊາວກະສິກອນໄດ້ຮັບຜົນຜະລິດທີ່ມີຄຸນນະພາບ ແລະ ສາມາດສະໜອງຕອບຄວາມຕ້ອງການແປຮູບຜະລິດຕະພັນໄດ້.
- ແທນທີ່ຈະເສຍເວລາເຂົ້າປ່າໄປເກັບເຄື່ອງປ່າຂອງດົງ ຊາວບ້ານສາມາດໃຊ້ເວລາດັ່ງກ່າວເພື່ອເອົາໃຈໃສ່ກັບກິດຈະກຳສ້າງລາຍຮັບອື່ນໆໄດ້.

ໝາກໜອດເປັນເຄື່ອງປ່າຂອງດົງທີ່ສາມາດປູກໄດ້ງ່າຍ ແຕ່ເຄື່ອງປ່າຂອງດົງຊະນິດອື່ນໆອາດຈະບໍ່ງ່າຍຄືກັນກັບໝາກໜອດດັ່ງນັ້ນຄວນມີການສຶກສາ ແລະ ທົດລອງປູກກ່ອນທີ່ຈະຂະຫຍາຍການປູກຝັງ.

## ການມີສ່ວນຮ່ວມຂອງພາກເອກະຊົນໃນການຜະລິດຂອງຊາວກະສິກອນ

ພໍ່ຄ້າໃນທ້ອງຖິ່ນມັກພົບພໍ້ກັບບັນຫາຫຍຸ້ງຍາກ ໃນການເກັບຊື້ຜົນຜະລິດໃຫ້ໄດ້ຕາມຄວາມຕ້ອງການດັ່ງນັ້ນເຂົາເຈົ້າຈຶ່ງມີຄວາມສົນໃຈເປັນພິເສດ ໃນການສະໜັບສະໜູນຊາວກະສິກອນໃນການປັບປຸງການສະ ໜອງຜະລິດຕະພັນ ດ້ວຍການສະໜອງອຸປະກອນການຜະລິດການຝຶກອົບຮົມທາງດ້ານເຕັກນິກ ແລະ ການຄໍ້າປະກັນຕະຫຼາດ. ແຕ່ເຖິງວ່າເປັນແນວນີ້ກໍ່ຕາມການສະໜັບສະໜູນຄືດັ່ງທີ່ກ່າວມາ ພໍ່ຄ້າກໍ່ຕ້ອງ ການຄວາມໝັ້ນໃຈວ່າພໍ່ຄ້າລາຍອື່ນຈະບໍ່ມາເກັບຊື້ຜະລິດຕະພັນເຫຼົ່ານັ້ນ. ດັ່ງນັ້ນຄວນພິຈາລະນາການ ເຮັດສັນຍາຮ່ວມກັບຊາວກະສິກອນ.

## ການໝູນໃຊ້ກຸ່ມບ້ານເປັນເວທີປຶກສາຫາລື

ກຸ່ມບ້ານມີພາລະບົດບາດສຳຄັນຫຼາຍຢ່າງໃນການສະໜັບສະໜູນ ແລະ ສົ່ງເສີມການປູກໝາກໜອດ ເປັນສິນຄ້າເຊັ່ນ:

- ເປັນເວທີປຶກສາຫາລືລະຫວ່າງຊາວກະສິກອນ ແລະ ພາກເອກະຊົນ. ໃນເມື່ອກ່ອນໂຮງງານໂພນງາມໃດ້ເຄີຍພະຍາຍາມຕິດຕໍ່ພົວພັນກັບຊາວກະສິກອນໃນການປູກໝາກໜອດແຕ່ ກໍ່ບໍ່ສຳເລັດ ເມື່ອໄດ້ມີການປຶກສາຫາລືກັນ ແລະ ມີການເຂົ້າຮ່ວມ

ຕິດຕາມຈາກພະນັກງານສົ່ງເສີມກະສິກຳເມືອງ ເຮັດໃຫ້ຊາວບ້ານມີຄວາມເຊື່ອໝັ້ນວ່າທາງໂຮງງານມີເຈດຕະນາຢາກຮ່ວມມືກັບຊາວບ້ານຢ່າງແທ້ຈິງ.

- ການແລກປ່ຽນຂໍ້ມູນລະຫວ່າງບ້ານ ແລະ ກຸ່ມບ້ານເຮັດໃຫ້ມີການຮັບຮູ້ຂໍ້ມູນຂ່າວສານກ່ຽວກັບຜົນ ການສຶກສາຕ່ອງໂສ້ການຕະຫຼາດແບບມີສ່ວນຮ່ວມໃນລະດັບກຸ່ມບ້ານຫຼາຍບ້ານເລີ່ມມີຄວາມສົນໃຈ ໃນການປູກໝາກໝອດເປັນສິນຄ້າ. ໃນຂັ້ນຕໍ່ໄປກອງປະຊຸມລະດັບກຸ່ມບ້ານກໍ່ຈະເປັນເວທີປຶກສາຫາລື ແລະ ແລກປ່ຽນບົດຮຽນ ແລະປະສົບການໃນການປູກໝາກໝອດໃຫ້ໄດ້ຮັບຜົນດີ.
- ກອງປະຊຸມແກ້ໄຂຂໍ້ຂັດແຍ່ງ: ພາກສ່ວນເອກະຊົນ ຫຼື ພໍ່ຄ້າກໍ່ມີຄວາມກັງວົນໃນການສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ຊາວກະສິກອນເພື່ອທຳການຜະລິດເຂົາເຈົ້າຢ້ານວ່າຊາວກະສິກອນ ຈະຂາຍສິນຄ້າໃຫ້ພໍ່ຄ້າລາຍອື່ນ. ໃນຄວາມເປັນຈິງແລ້ວເມື່ອພໍ່ຄ້າລາຍອື່ນຕ້ອງການໝາກໝອດ ຈາກເຂດພື້ນທີ່ການສະໜັບສະໜູນຂອງໂຮງງານໂພນງາມໃຕ້ ທາງອຳນາດການປົກຄອງ ຈະໃຫ້ບູລິມະສິດແກ່ໂຮງງານກ່ອນແຕ່ກໍ່ກັບບັນຫາດັ່ງກ່າວ ກຸ່ມບ້ານມີພາລະບົດບາດສຳຄັນທີ່ສຸດ ໃນການອຳນວຍຄວາມສະດວກໃນການພົບປະເພື່ອຫາລືແກ້ໄຂບັນຫາຕ່າງໆຮ່ວມກັນ.

ໂຄງການພັດທະນາວິສາຫະກິດກະສິກຳຂະໜາດນ້ອຍໃນເຂດພູດອຍ (SADU)

SADU ໄດ້ຮັບທຶນຈາກ SDC ແລະ ຈັດຕັ້ງປະຕິບັດໂດຍ NAFRI ແລະ CIAT ເພື່ອທົດລອງວິທີການແບບໃໝ່ເພື່ອໃຫ້ຊາວກະສິກອນເຂົ້າຮ່ວມໃນລະບົບຕະຫຼາດ. ກິດຈະກຳເບື້ອງຕົ້ນແມ່ນຢູ່ໃນແຂວງຊຽງຂວາງ (ເມືອງແປກ, ເມືອງຄູນ, ເມືອງພູກູດ) ແລະ ໃນແຂວງຫຼວງພະບາງ (ເມືອງຊຽງເງິນ ແລະ ເມືອງປາກແຊງ).

ຂໍ້ມູນເພີ່ມເຕີມສາມາດຕິດຕໍ່ເອົາໄດ້ທີ່ ຫ້ອງການ CIATຂອງ NAFRI, ເວັບໄຊຂອງ NAFRI “www.nafri.org.la” ຫຼື ເວບໄຊຂອງ CIAT Asia “www.saduproject.org”